ຂອບໃຈທີ່ທ່ານເພີ້ມ    ເຕີມຕື່ມແຮງໃຈ
ໂມທະນາ ເປັນນາມຊາຍ   ອ້າຍບໍ່ມີຄາຣົມຊ້ອນ
ສ່ວນວ່າບັງອອນນ້ອງ    ສາວຫຼັກເຈັດກໍເໝືອນດັ່ງ ອ້າຍແລ້ວ
ທາງຫຼັງກໍວ່າຫຼັງ  ທາງໜ້າກໍວ່າໜ້າ ບໍ່ມີກ້າຫຼຽມຄົມ ດອກເດີ

ຄວາມເສົ້າຕຣົມເຄີຍເຊື່ອງຊ້ອນ   ຊອນຢູ່ທາງໃນ  ຫຼາຍປີແລ້ວ
ມີພັຍພານໃນຊີວິດ    ອະດີດຂົມຕຣົມເສົ້າ
ມີແຕ່ເງົາບັງໄວ້    ສີສຶກໃສບໍ່ໃຫ້ເຫຼື່ອມ
ເອື້ອມຢາກເປັນດອກຟ້າ    ປາກກາກ້ອງຕັ້ງແຕ່ນານ

ສ່ວນວ່າທາງວຽກບ້ານ    ງານໃຫຍ່ດູແລບຸດ
ສຸດກໍາລັງແຮງຍິງ    ທີ່ເຝົ້າຫຼິງແລເຈົ້າ
ບັນຫາຄົນເຮົານີ້    ທຸກຄົນມີ ແຕ່ມັນຕ່າງ
ບາງຜ່ອງດີ ຜ່ອງຮ້າຍ  ລາຍກ້ຽວກໍຕ່າງກັນ ທ່ານເອີຍ

ສ່ວນຊີວິດນ້ອງນັ້ນ    ສູ້ຜ່ານມານານນັບ
ລະດັບຮຽນພໍປານກາງ    ບໍ່ຫ່າງໄກຫຼືໃກ້
ພຽງແຕ່ພໍໄປໄດ້    ທາງໃນບໍ່ເຄີຍເຊື່ອງ
ສ່ວນການເມືອງນ້ອງບໍ່ສູ້  ປັນຍາຮູ້ແຕ່ຝ່າຍຂຽນ

ຊີວິດວຽນວ່າວຸ້ນ    ວົນຢູ່ຫຼາຍປີ  ອ້າຍເອີຍ
ຈົນກວ່າມີເວລາພົບ    ເພື່ອນນັກຮຽນແຕ່ຄາວກີ້
ບຸນມີມາເຫັນໜ້າ    ບັນດາຄູ ອາຈານເກົ່າ
ຊາວຫຼັກເຈັດເພື່ອນເຮົາ  ສາມສິບປີທີ່ຮ້າງ ບຸນສ້າງຈຶ່ງພົບກັນ

ຄຣູອາຈານທົ່ວໜ້າ ຢາຍທົ່ວ ໂລກາ
ຕາງກໍບິນມາພົບ ຈອບກັນໃນວັນນັ້ນ
ຄວາມຝັນນາງເຄີຍສ້າງ ມາເປັນຈິງຈົນເກີນຄາດ
ສາຍສາມາດ ອາຈານມອບກຽດໃຫ້ ນ້ຳຕານ້ອງຫຼັ່ງຢູ່ໃນ ອ້າຍເອີຍ

ພວງມະລັຍທີ່ໄດ້ ຈາກໃຈເພື່ອນຊາວຫຼັກເຈັດ
ເຮັດໃຫ້ນາງພູມໃຈ ຢູ່ຂ້າງກາຍມີອ້າຍ
ຊາຍທີ່ຄຽງນາງນັ້ນ ນິຣາວັນ ເປັນຊື່
ຈື່ຈຳຊາຍຕັ້ງແຕ່ເຄົ້າ ພວກເຮົາເຂົ້າຮ່ວມຮຽນ

ຫຼາຍປີວຽນຜ່ານພົ້ນ ຜົນງານທ່ານນັ້ນມີຫຼາຍ
ກາຍເປັນອາຈານໜູ ນິຣາວັນ ພວກເຮົາຮູ້
ບັນດາຄຣູອາຈານນ້ອງ ມອງຜົນງານເພິ່ນແລຫຼ່ຳ
ນຳໄປທົ່ວທຸກຫ້ອງ ຜົນງານນ້ອງເພິ່ນອ່ານດູ

ຈາກນັ້ນ ໃຫ້ຊາວລາວຮັບຮູ້ ຜູ້ມີຊື່ສາວຫຼັກເຈັດ
ເມັດນ້ຳຕານເມືອງສວັນ ຜູ້ຮັກພົງພັນເຊື້ອ
ທ່ານເລີຍຈູນເຈືອໃຫ້ ເອົາແວັບຊາຍເປັນທາງໄຕ່
ເປັນສະພານສາຍໃຫຍ່ ໃຫ້ຊາວລາວເພິ່ນຮັບຮູ້ ສາວຄຣູນ້ອງນັກຂຽນ

ໂລກໝູນວຽນຢູ່ບໍ່ຢັ້ງ ໄປຝຣັ່ງຊິຖາມຫາ
ທ່ານອາຈານ ໂມທະນາ ຄິດວ່າຄົງບໍ່ລືມນ້ອງ
ໝາຍປອງໄປຫຼາຍຄັ້ງ ບໍ່ສົມຫວັງມີແຕ່ພາດ
ວາສນາບໍ່ໃຫ້ ກໍເລີຍໄດ້ແຕ່ຝັນ ອ້າຍເອີຍ

ຄວາມສັມພັນທ່ານທີ່ນີ້ ເວທີເພື່ອນຊາວລາວ

*ລວມທັງເຮົາຊາວຄຣູ     ໃຫ້ຄູ່ປອງດອງໄວ້*
*ນາງຂໍເປັນສະພານໃຫ້     ສາຍສັມພັນພໍໄດ້ໄຕ່*
*ທົ່ວ ໂລກາແດນໃດ ລາວຢູ່ເໜືອຫຼືຢູ່ໃຕ້ ໃກໄກ້ກໍແມ່ນລາວ ທ່ານເອີຍ*

*ໂດຍ:  ສາວຫຼັກເຈັດ ເມັດນ້ຳຕານເມືອງສວັນ*